ຂໍ້ມູນຕິດຕໍ່:

Email: syvongsak123@gmail.com ໂທ: +85620 98003648

# Lan Xang Literature

## Lecture 7:

## The Epic Story of Thao Hung - Thao Cheuang (Con.)

ຂໍ້ມູນຕິດຕໍ່:
Email: syvongsak123@gmail.com ໂທ: +85620 98003648

# ບົດສອນ

**ວິຊາ:** ວັນນະຄະດີລ້ານຊ້າງ
**ລະຫັດ:** 0907409
**ບົດທີ 3: ມະຫາກາບເລື່ອງ "ທ້າວຮຸ່ງ-ທ້າວເຈືອງ" (ຕໍ່)** ເວລາ: 90 ນາທີ
**ຜູ້ບັນຍາຍ:** ປທ. ສົມທະເພີຍ ສີວົງສັກ
**ປີ:** 3
**ພາກຮຽນ:** 2
**ສົກຮຽນ:** 2022-2023

<table>
<tr><td colspan="2">ຂັ້ນຕອນ 1 - ຜົນຮັບທີ່ຕ້ອງການ (Desire Results)</td></tr>
<tr><td colspan="2">ສ້າງເປົ້າໝາຍ (Goal):<br>ນັກຮຽນຈະຮູ້:<br>- ວັດທະນະທຳ ແລະ ຮີດຄອງປະເພນີບາງດ້ານໃນມະຫາກາບທ້າວຮຸ່ງ-ທ້າວເຈືອງ<br>- ການຂໍລູກຈາກແຖນ ແລະ ການກຳເນີດເດັກນ້ອຍຂອງຄົນບູຮານ<br>- ປະເພນີການສູ່ຂໍສາວ ແລະ ການແຕ່ງດອງໃນວົງຄະນະຍາດດຽວກັນ.</td></tr>
<tr><td>ຄວາມເຂົ້າໃຈ (Understand):<br>ນັກຮຽນຈະເຂົ້າໃຈ:<br>- ວັດທະນະທຳ ແລະ ຮີດຄອງປະເພນີບາງດ້ານໃນມະຫາກາບທ້າວຮຸ່ງ-ທ້າວເຈືອງ<br>- ການຂໍລູກຈາກແຖນ ແລະ ການກຳເນີດເດັກນ້ອຍຂອງຄົນບູຮານ<br>- ປະເພນີການສູ່ຂໍສາວ ແລະ ການແຕ່ງດອງໃນວົງຄະນະຍາດດຽວກັນ.</td><td>ຄຳຖາມຫຼັກ (Questions):<br>1) ການຂໍລູກຈາກແຖນ ແລະ ການກຳເນີດເດັກນ້ອຍຂອງຄົນບູຮານໃນບົດເລື່ອງເພິ່ນເຮັດແນວໃດ?<br>2) ປະເພນີການສູ່ຂໍສາວ ແລະ ການແຕ່ງດອງໃນວົງຄະນະຍາດດຽວກັນເພິ່ນເຮັດແນວໃດ?</td></tr>
<tr><td>ຄວາມຮູ້ (Knowledge):<br>- ໃຫ້ນັກຮຽນຮູ້ໄດ້ເຖິງວັດທະນະທຳ ແລະ ຮີດຄອງປະເພນີບາງດ້ານໃນມະຫາກາບທ້າວຮຸ່ງ-ທ້າວເຈືອງເຊັ່ນ ການຂໍລູກຈາກແຖນ, ການກຳເນີດເດັກນ້ອຍ, ການສູ່ຂໍສາວ ແລະການແຕ່ງດອງ.</td><td>ທັກສະ (Skills):<br>- ອະທິບາຍໄດ້ເຖິງວັດທະນະທຳ ແລະ ຮີດຄອງປະເພນີບາງດ້ານໃນມະຫາກາບທ້າວຮຸ່ງ-ທ້າວເຈືອງ.</td></tr>
<tr><td colspan="2">ຂັ້ນຕອນ 2 - ຫຼັກຖານປະເມີນ (Evidence)</td></tr>
<tr><td>ໜ້າວຽກສິດສອນ (Tasks):<br>- ສັງເກດການຄົ້ນຄວ້າຂອງນັກສຶກສາ</td><td>ຫຼັກຖານອື່ນໆ (Other Evidence):<br>- ລາຍງານຜົນການຄົ້ນຄວ້າ</td></tr>
</table>

ຂໍ້ມູນຕິດຕໍ່:

Email: syvongsak123@gmail.com ໂທ: +85620 98003648

| | |
|---|---|
| - ສົນທະນາຖາມ-ຕອບ<br>- ແນະນຳການຄົ້ນຄວ້າ.<br>- ໃບວຽກບ້ານ | - ເນື້ອໃນຄຳຕອບກິດຈະກຳຂອງນັກສຶກສາ<br>- ການສັງຮວມກິດຈະກຳ<br>- ຜົນການກວດວຽກບ້ານ |

**ຂັ້ນຕອນ 3 ແຜນການຮຽນ-ການສອນ (Teaching and Learning Plan)**

- **ສື່ການສອນມີ:**

ປຶ້ມຕຳລາວິຊາວັນນະຄະດີລ້ານຊ້າງ, ປຶ້ມມະຫາກາບທ້າວຮຸ່ງ-ທ້າວເຈືອງ, ເວັບໄຊ້ຂໍ້ມູນ, ຄອມພິວເຕີ, ເຄື່ອງສາຍ LCD.

- **ກິດຈະກຳການຮຽນ**

**ທວນຄືນ ແລະ ລົງວເຂົ້າສູ່ບົດຮຽນ:**

**I. ທວນຄືນບົດຮຽນເກົ່າ**

- ຄູນຳພານັກຮຽນທວນຄືນບົດຮຽນ ໂດຍໃຫ້ນັກຮຽນເວົ້າເຖິງສິລະປະການປະພັນ, ຂໍ້ມູນທາງປະຫວັດສາດ ແລະວັດທະນະທຳ-ຮີດຄອງຂອງມະຫາກາບທ້າວຮຸ່ງ-ທ້າວເຈືອງໂດຍຫຍໍ້.

**II. ຂັ້ນລົງວເຂົ້າສູ່ບົດສອນ:**

**ບົດທີ 3**

**ມະຫາກາບເລື່ອງ "ທ້າວຮຸ່ງ-ທ້າວເຈືອງ" (ຕໍ່)**

**3.3 ວັດທະນະທຳ ແລະ ຮີດຄອງປະເພນີບາງດ້ານໃນມະຫາກາບທ້າວຮຸ່ງ-ທ້າວເຈືອງ**

**3.3.1 ການຂໍລູກຈາກແຖນ ແລະ ການກຳເນີດເດັກນ້ອຍຂອງຄົນບູຮານ** (30 ນາທີ)

**<u>ກິດຈະກຳ 1:</u>**

- ຄູຕັ້ງຄຳຖາມໃຫ້ນັກສຶກສາຄົ້ນຄວ້າ, ສະເໜີນັກສຶກສາອ່ານປຶ້ມຕຳລາ
    1) ການຂໍລູກຈາກແຖນ ແລະ ການກຳເນີດເດັກນ້ອຍຂອງຄົນບູຮານໃນບົດເລື່ອງເພິ່ນເຮັດແນວໃດ?
- ຄູໃຫ້ນັກສຶກສາຕອບ 1-2 ຄົນ (10 ນາທີ)
- ຄູສະຫຼຸບບົດຮຽນກິດຈະກຳ: (20 ນາທີ)

ກ່ອນຍຸກສາສະໜາພຸດບໍ່ທັນເຂົ້າມາມີບົດບາດອິດທິພົນ ແລະ ເປັນທີ່ຍອມຮັບຂອງປະຊາຊົນລາວໃນສະຕະວັດທີ XIV ນັ້ນປະຊາຊົນລາວໄດ້ມີການເຄົາລົບບູຊານັບຖືຜີເຊິ່ງໃນນັ້ນຜີກໍມີຫຼາຍປະເພດຕ່າງກັນເຊັ່ນ: ຜີແຖນ, ຜີອາຮັກຫຼັກເມືອງ, ຜີນໍ້າ, ຜີພູ, ຜີດໍ້າ, ຜີເຮືອນ ແລະ ອື່ນໆ. ແຕ່ລະຜີກໍມີການພົວພັນກັບມະນຸດຂອງພວກເຮົາແຕ່ມີບົດບາດອິດທິພົນແຕກຕ່າງກັນໄປ. ພວກເຮົາຈະເຫັນຢ່າງຊັດເຈນທີ່ສຸດດັ່ງຄຳທີ່ກ່າວຢູ່ໃນພາລະຊາໂອວາດຂອງເຈົ້າຟ້າງຸ່ມທີ່ປະທານຕໍ່ເສນາປະຊາລະຊະດອນທີ່ວຽງຈັນໃນປີ ຄສ 1357 ໃນໂອກາດສະຫຼອງໄຊຊະນະວ່າ... ສາມປີຈິ່ງໃຫ້ເຈົ້າທັງຫຼາຍຂຶ້ນເມືອໄຫວ້ເຮົາຮອດເມືອງຊຽງດົງຊຽງທອງພຸ້ນແລ້ວເຮົາຈັກໄດ້ບູຊາແຖນຟ້າຄື່ນ ທັງແຖນຄົນ, ແຖນແຕ່ງ, ແຖນຊັ່ງ, ແຖນເຖືອກ, ທັງເຖົ້າເຍີເຖົ້າໄລ, ແມ່ຍ່າງ່າມ, ແມ່ມົດເທວະດາອັນຮັກສາຜ່າຕົ່ງ ແລະ ສິບອູ ແລະ ອື່ນໆ... ອັນວ່າໃຫ້ລົງຽງຟ້າລຽງແຖນປູ່

ຂໍ້ມູນຕິດຕໍ່:

Email: syvongsak123@gmail.com ໂທ: +85620 98003648

ເຈົ້າຟ້າຫຼວງໂງ່ມຫາກໄດ້ສັ່ງເຮົາໄວ້… (ພົງສາວະດານລາວ, ພະຊາອານາຈັກລາວ, ກະຊວງສຶກສາທິການ, ສິລາ ວິລາວົງ, ພສ 2500-ຄສ 1757 ໜ້າ 69 ຂໍ້ 3).

ໃນພະລາສະໂອອາດນີ້ໄດ້ບົ່ງບອກເຖິງຄວາມແນ່ນອນວ່າປະຊາຊົນລາວໃນເມື່ອກ່ອນຖືຜີຟ້າ-ຜີແຖນເປັນສິ່ງສໍາຄັນທີ່ສຸດເພາະວ່າເຊື່ອວ່າຄົນເຮົາກໍາເນີດອອກມາໃນແຜ່ນດິນກໍຍ້ອນແຖນເປັນຜູ້ສົ່ງມາເກີດ ຫຼື ບ່າວສາວຮັກກັນແຕ່ບໍ່ໄດ້ກັນກໍຍ້ອນມີກົກມື້ງກົກແນນບໍ່ກ່ຽວກັນແຕ່ເມືອງຟ້າ.

ນອກຈາກນີ້ໃນແງ່ປະຫວັດສາດຄໍາວ່າ: ລາວ ແມ່ນຄໍາດຽວກັນກັບ ດາວ ເນື່ອງຈາກວ່າຄົນພວກລາວດໍາລົງຊີວິດຢູ່ບ່ອນສູງມີຄວາມຈະເລີນມາກ່ອນຈີນຈຶ່ງເປັນພວກດາວ ຫຼື ຖຽນ, ແຖນ, ໄທ,ໄທເຊິ່ງໝາຍຄວາມວ່າ “ຟ້າ” ດັ່ງດຽວກັນກັບລາວກໍຕ້ອງແປວ່າ “ຟ້າ”.

ຢູ່ໃນກາບທ້າວຮຸ່ງ - ທ້າວເຈືອງຕອນ (ອຸບັດຕິບົ້ນ) ໄດ້ກ່າວເຖິງຂຸນຈອມທໍາເຈົ້າຄອງເມືອງສອນຕານກັບນາງຈອມບໍ່ມີຜູ້ສືບແທນເຊື້ອສາຍຕໍ່ໄປໃນອະນາຄົດ, ນາງຈອມທໍາ (ຮຽກຕາມນາມມະຍົດຂອງສາມີ) ເວົ້າກັບສາມີເລື່ອງຂອງອະນາຄົດຂອງຜູ້ຈະມາສືບແຖນບັນລັງ.ໃນສະໄໝບູຮານໂດຍອີງໃສລະບຽບຂອງເຈົ້າຄອງສູງສຸດແລ້ວຜູ້ທີ່ຈະມາສືບແທນບັນລັງບໍ່ແມ່ນບຸກຄົນໄດ້ກໍຈະມີສິດສືບແທນໄດ້, ດັ່ງນັ້ນຜູ້ຈະມາສືບແທນກໍຕ້ອງແມ່ນຜູ້ຊາຍ ຜູ້ທີ່ສາມາດຕັດສິນເກັ່ງກາສາມາດ ແລະ ວິເສດໂສໄປກວ່າຄົນທໍາມະດາເຊິ່ງມີຄວາມລັກສະນະດີເລີດມາຕັ້ງແຕ່ຢູ່ໃນອຸທອນຂອງມານດາເຊັ່ນ ໃນເລື່ອງສິນໄຊ, ເລື່ອງທ້າວຮຸ່ງ - ທ້າວເຈືອງ.

ຖ້າຢາກໄດ້ຕາມຄວາມມຸ່ງມາດປາດຖະໜາກໍຕ້ອງໄດ້ຮອງຂໍລູກນໍາແຖນເພື່ອສົ່ງບຸກຄົນກ້າຫານລົງມາເກີດດັ່ງວ່າ:

ປະກອບໄຕ້ທຽນທູບ ມາລາ
ເລີຍລອດ ຍວງຄໍາເຖິງໝູ່ແຖນ ຖະແຫຼງຖ້ອຍ
ບັດນີ້ ພາຣາພື້ນນາຄອງ ເຂັນຂາດ
ເພາະບໍ່ມີລູກນ້ອຍແທນສ້າງ ສືບເມືອງ
ຂໍອາດເຈົ້າຈອມໂລກ ຫຼິງດູແດ່ເນີ
ຄໍາເຄືອງມີທໍ່ດຽວ ດູໄຂ້
ຂໍພະທົງທໍາຊໍ້າກູນາ ນໍາສັ່ງ
ຜາຍໂຜດໃຫ້ໂດຍໄດ້ ດັ່ງລາງແດ່ເນີ…
ຍົດໂຍກເຈົ້າຟ້າຄືນ ຄະນິງຄຸນ
ຮົມເພິງຂາມໝ່ຽວເຈືອງ ໃຈກ້າ
ເຊີນສີແກ້ວບຸນສູງ ສະເດັດດ່ວນ
ລົງຈາກຟ້າສະຖານສ້າງ ສໍ່າຮານ

(ດວງເດືອນ ບຸນຍາວົງ; ໂອທອງ ຄໍາອິນຊູ ແລະ ສົມໄພ ວິໄລສັກ,2000)

ເມື່ອແຖນໄດ້ສັ່ງຜູ້ໃດຜູ້ໜຶ່ງລົງມາເກີດຢູ່ໃນເມືອງມະນຸດຕາມຄຳຮ້ອງຂໍແລ້ວ, ເມື່ອບຸກຄົນນັ້ນລົງມາເກີດຖືກມື້ບໍ່ດີເຊິ່ງຄຳບູຮານວ່າ "ມື້ແຂງ" ເປັນມື້ເຂັດມື້ຂວາງຈະເຮັດໃຫ້ສະຕາວາດສະໜາບໍ່ຈະເລີນກວ້າງຂວາງ, ບໍ່ເປັນທີ່ເຄົາລົບຂອງປະຊາຊົນຊາວເມືອງແລ້ວກໍຈະມີການປ່ຽນຊື່ໃຫ້ມີຄວາມສຸກກຸ້ມຊຸ່ມເຢັນເຊິ່ງບັນຫານີ້ປະຊາຊົນລາວບາງທ້ອງຖິ່ນກໍຍັງມີຄວາມເຊື່ອແບບທີ່ສະແດງອອກໃນບົດເລື່ອງ ທ້າວຮຸ່ງ-ທ້າວເຈືອງດັ່ງນັ້ນ:

ເມື່ອນັ້ນ ທຸກທີ່ໄຫ້ໂຮມຮອດ ໜໍໂທນ
ເຂົາກໍ ຍໍກະດາຫີນວາດດູ ກົງແກ້ວ
ຊາຕາໄດ້ອັກຂະລາສີ ຮຽງຮ່ອມ
ລາຫູຜາດຜ້າຍຜັນໃກ້ ຮ່ອມຈັນ
ນັກຂັດຕະລຶກໄດ້ດາວໃຫຍ່ ວິສາຂະ
ອາທິດຈັນເສົາພ້ອມພຸດທະເນົາ ໃນເມດ
ດາວເສດສັດເລົ່າກັ້ງກວມໄວ້ ຂ່ວງພຽງ
ຢຽວວ່າທຸກແຕ່ນ້ອຍແພ້ພໍ່ ດຽວລຸນ
ປຸນປີເດືອນໃຫຍ່ສູງ ສອນໜ້າ
ຫອມພົນໄຮ້ນາຄອງ ແຄ້ນຄັ່ງ
ແກ້ວກໍ່າພ້າພາຍໜ້າ ຫາກຊິຂວາງ...
ແຕ່ນັ້ນ ເຂົາຫານາມເຈົ້າບາຄານ ຕົນປະເສີດ
ຊື່ວ່າ ທ້າວຮຸ່ງຜູ້ແພງລ້ານ ລູກຈອມ

(ດວງເດືອນ ບຸນຍາວົງ; ໂອທອງ ຄຳອິນຊູ ແລະ ສົມໄພ ວິໄລສັກ, 2000)

ເລື່ອງນີ້ຍັງໄດ້ສ່ອງແສງໃຫ້ເຮົາເຫັນທາງດ້ານປະເພນີຮີດຄອງໃນການໃຫ້ກຳເນີດເດັກນ້ອຍໃນຍຸກບູຮານເຫັນວ່າເປັນບັນຫາໜຶ່ງທີ່ໜ້າສຶກສາເພາະວ່າການກຳເນີດໃນປັດຈຸບັນກໍມີຫຼາຍຂໍ້ມູນສືບມາແຕ່ໃນສະໄໝກ່ອນໆພຸ້ນ. ມີບາງບັນຫາທີ່ພວກເຮົາຄິດວ່າມັນເປັນເລື່ອງທີ່ງົມງວາຍຫຼ້າຫຼັງແຕ່ໃນຄວາມເປັນຈິງແລ້ວເຫັນວ່າ: ມັນເປັນວິທະຍາສາດອີກຢ່າງໜຶ່ງທີ່ຊ່ວຍໃຫ້ເປັນກຳລັງໃຈຂອງຜູ້ໃຫ້ກຳເນີດເຊິ່ງມັນກໍຖືກກັບແນວຄິດຈິດໃຈຂອງຄົນເຮົາຢູ່ບ່ອນວ່າສີປາກຄົນມັນເປັນພະລັງໃຈອັນມະຫາສານ, ການໃຫ້ກຳເນີດເຊິ່ງມັນກໍຖືກກັບແນວຄິດຈິດໃຈຂອງຄົນເຮົາຢູ່ບ່ອນວ່າສີປາກຄົນມັນເປັນພະລັງໃຈອັນມະຫາສານ, ການໃຫ້ຄວາມອົບອຸ່ນແກ່ກັນ, ຄວາມອອຍພອນທີ່ປະເສີດເລີດລ້ຳມັນຍ່ອມເປັນສີລິມຸງຄຸນ. ດັ່ງນັ້ນ, ເມື່ອເດັກເກີດມາຈຶ່ງມີພິທີການຕ່າງໆເຊັ່ນການໃຊ້ຍາມ, ການດູດວງສະຕາ, ການຕັ້ງຊື່ ຫຼື ປ່ຽນຊື່, ການແກ້ດວງຊາຕາ, ການອາບນ້ຳໃຫ້ເດັກດັ່ງຄຳກອນທີ່ວ່າ:

ບາງພ່ອງເຂົ້າແທບໃກ້ຫັດຖະບາດ ບັງຄົມ
ເຂົາກໍຫອມເທພີສວ່າຍສົງ ເລີຍແລ້ວ
ເລີຍເລົ່າ ປຸນຄວາມໃຫ້ຫາລົວ ເຖົ້າແກ່

ຂໍ້ມູນຕິດຕໍ່:

Email: syvongsak123@gmail.com ໂທ: +85620 98003648

ຍໍໃສ່ດົ້ງກະບຽນແກ້ວ ຜອກຜີ
ລົວກໍວາງຄວາມຕ້ານເຖິງຜີ ສວາງໃຫຍ່
ຮຽກຄູ່ໄຫ້ຄວາງຟ້າ ຟາກສະຫວັນ
ໄຈໄຄ່ນໍ້າຕົກຕາດ ລົມທອງມາເອົາ
ສະກັນຜີໝື່ນແສນ ນອນເຝົ້າ
ອາຮັກເຈົ້ານາຄອງ ທ້າວໃຫຍ່ ເອົາມາ
ເຈົ້າແອດຜູ້ໃຈກ້າ ກວ່າສວາງມາເອົາ

(ດວງເດືອນ ບຸນຍາວົງ; ໂອທອງ ຄໍາອິນຊູ ແລະ ສົມໄພ ວິໄລສັກ, 2000)

ເມື່ອເກີດເດັກມາເຂົາກໍເອົາເດັກໄປໃຫ້ແມ່ໄດ້ຊົມເພື່ອເປັນກໍາລັງໃຈວ່າເດັກນັ້ນສົມບູນແຂງແຮງດີ, ຄົບອະໄວຍະວະທັງ 32 ຢ່າງ ຫຼື ບໍ່, ຖ້າແຂງແຮງດີທຸກຢ່າງກໍຖືວ່າໄດ້ຕາມຄວາມມຸ້ງຫວັງໃນເບື້ອງຕົ້ນ, ຈາກນັ້ນເຂົາກໍເອົາເດັກໄປໃສ່ກະດົ້ງ ຫຼື ກະບຽນເພື່ອປະຕິບັດຕາມຮີດຄອງ, ເອີ້ນເອົາຜີສາງຕ່າງໆໃຫ້ມາເອົາ, ຖ້າວ່າຜີບໍ່ມາເອົາຈະຖືວ່າເດັກນອນນັ້ນຈະເປັນຂອງຜູ້ໃຫ້ກໍາເນີດ ແລະ ຜູ້ອື່ນ ຫຼື ຜີສາງທັງຫຼາຍທັງຫຼາຍບໍ່ມີສິດມາລ່ວງເກີນຢ່າງເດັດຂາດ. ການປະຕິບັດແບບນີ້ເພື່ອເຮັດໃຫ້ເດັກເກີດມີສຽງຮັບເອົາຊີວິດໃໝ່ຢ່າງແທ້ຈິງ.

ເມື່ອເອົາເດັກອາບນໍ້າໃຫ້ສະອາດແລ້ວຜູ້ເປັນຜີປ້ານ້າອາກໍຮຽກຂວັນເອົາເດັກມາໂຮມເນື້ອໂຮມຕົວໃຫ້ໃຫຍ່ກ້າໜ້າບານດັ່ງຄໍາກອນທີ່ວ່າ:

ມາເຢີ ໝັກໝື່ນເນື້ອນ້ອຍອ່ອນ ຂວັນຫົວ ມາເຢີ
ທັງແຂນກົມໄຫຼ່ຂວາ ແຂນເຈົ້າ
ແອວອິງອ້ອນ ເລົາຄີງ ຂວັນພະເນດກໍມາ
ຢືນຢູ່ໝັ້ນໃນຢ້າວ ໝື່ນປີ ແມ່ທ້ອນ
ສວ່າງພ້ອມຄັບຄັ່ງ ໂຮມຂວັນ
ເຂົາກໍໂຈມຈອມສີໃສ່ເພົາ ພຽນປ້ອມ...

(ດວງເດືອນ ບຸນຍາວົງ; ໂອທອງ ຄໍາອິນຊູ ແລະ ສົມໄພ ວິໄລສັກ, 2000)

ຖ້າເວົ້າຢູ່ໃນແງ່ວິທະຍາສາດແລ້ວເຫັນວ່າ ການເຮັດໃຫ້ເດັກນ້ອຍເກີດມີສຽງໃຫ້ຂຶ້ນມັນເຮັດໃຫ້ຂັບໄລ່ສິ່ງເຮິະຮ້າຍອອກຈາກປາກ, ດັງຂອງເດັກນ້ອຍ, ຖ້າເດັກກໍາເນີດມາບໍ່ມີສຽງຮ້ອງໃຫ້ຖືວ່າເປັນການຜິດປົກກະຕິ, ຜູ້ເປັນພໍ່ແມ່ກໍຈະນ້ອຍໃຈວ່າເດັກບໍ່ສົມບູນ, ອາດຈະເປັນເດັກນ້ອຍປັນຍາອ່ອນ ຫຼື ອື່ນໆກໍເປັນໄດ້.

ການຮຽກຂວັນເອົາເດັກນັ້ນມັນເປັນປະເພນີດີງາມຂອງຄົນລາວຍ້ອນເຊື່ອວ່າຄົນເຮົາມີຂວັນຫຼາຍຂວັນຢູ່ໃນຮ່າງກາຍໃຫ້ມາໂຮມກັນ, ນອກຈາກນັ້ນກໍມີການປ້ອນເຂົ້າ ຫຼື ຈ່ອມເຂົ້າ ໝາຍຄວາມວ່າຫຍໍ້ເຂົ້າໃຫ້ມຸ່ນດີປ້ອນໃສ່ປາກເດັກ, ໃນແງ່ບູຮານແລ້ວກໍອາດຈະມີຫຼາຍເຊັ່ນ: ເດັກຮູ້ກິນເຂົ້າ, ກິນນົມໄດ້ກໍຖືວ່າເດັກແຂງແຮງດີ, ເມື່ອກິນເຂົ້າ, ກິນນົມ

ຈາກແມ່-ຈາກມະນຸດແລ້ວຈະມີໂອກາດເຕີບໂຕຂຶ້ນຕາມໄວ, ເດັກຢູ່ໃນການດູແລຂອງມະນຸດສ່ວນພີສາງນາງໄມ້ກໍຈະໝົດສິດເອົາເດັກນ້ອຍໄປຢ່າງເດັດຂາດ ແລະ ເຫດຜົນອື່ນໆ.

ວິທີທີ່ກ່າວມາຂ້າງເທິງນີ້ປະຊາຊົນລາວບາງທ້ອງຖິ່ນກໍຍັງປະຕິບັດເປັນຕົ້ນວ່າເມື່ອເກີດມາແລ້ວຫຼັງຈາກທຳຄວາມສະອາດໃຫ້ເດັກຮຽບຮ້ອຍດີພວກເຖົ້າແກ່ກໍຊອກເອົາສຸພາບສະຕີຜູ້ໜຸ່ມນ້ອຍທີ່ສຸດ, ບໍ່ເປັນພະຍາດ ແລະ ເປັນຜູ້ສະຫງ່າງາມຄ່ຽງຄົມ, ຮູ້ຈັກເຮັດຫູກເຮັດຝ້າຍ (ຄົນຊ່າງ) ໝາຍຄວາມວ່າຕ້ອງຮອບຮູ້ດ້ວຍວຽກການງານມາຈ່ອມເຂົ້ານີ້ມີສອງແງ່ຄື: ໃນແງ່ບູຮານແມ່ນເພື່ອໃຫ້ເດັກໄດ້ເຊື້ອໄດ້ແນວ, ໄດ້ສືບທອດຄວາມດີ, ຄວາມຊ່າງກັບແມ່ຍິງຄົນນັ້ນ, ຖ້າເປັນຄົນບໍ່ດີເມື່ອເດັກໃຫຍ່ມາກໍບໍ່ດີຄືກັນ. ໃນແງ່ວິທະຍາສາດແມ່ນບໍ່ໃຫ້ເດັກຕິດແປດພະຍາດນຳ, ຖ້າວ່າຜູ້ປ້ອນເຂົ້າເປັນພະຍາດຊ້ຳເຮື້ອ, ເຈັບແຂ້ວແມງ, ປອດແຫ້ງ... ເດັກກໍຈະຕິດແປດພະຍາດນຳ.

### 3.3.2 ປະເພນີການສູ່ຂໍສາວ ແລະ ການແຕ່ງດອງໃນວັງຄະນະຍາດດຽວກັນ. (30 ນາທີ)

<u>**ກິດຈະກຳ 2:**</u>

- ຄູຕັ້ງຄຳຖາມໃຫ້ນັກສຶກສາຄົ້ນຄວ້າ, ສະເໜີນັກສຶກສາອ່ານປຶ້ມຕຳລາ

  1) ປະເພນີການສູ່ຂໍສາວ ແລະ ການແຕ່ງດອງໃນວົງຄະນະຍາດດຽວກັນເພິ່ນເຮັດແນວໃດ?

- ຄູໃຫ້ນັກສຶກສາຕອບ 1-2 ຄົນ (10 ນາທີ)
- ຄູສະຫຼຸບບົດຮຽນກິດຈະກຳ: (20 ນາທີ)

ການສູ່ຂໍສາວໝາຍຄວາມວ່າຜູ້ຊາຍໄປສູ່ຂໍເອົາຜູ້ຍິງມາເປັນຄູ່ຄອງຊີວິດຢູ່ນຳກັນຕະຫຼອດໄປ. ແຕ່ວ່າກ່ອນຈະໄປສູ່ຂໍນັ້ນກ່ອນອື່ນໝົດຜູ້ຊາຍຕ້ອງເຫັນຜູ້ສາວນັ້ນກ່ອນ. ເມື່ອເຫັນວ່າແມ່ຍິງຖືກອົກຖືກໃຈ, ມີຄວາມດຸໝັ່ນຂະຫຍັນພຽນ, ມີຄວາມເໝາະກັບຕົນເອງໝົດທຸກຢ່າງທັງໄດ້ຮັບການສະໜັບສະໜູນກັບພໍ່ແມ່ລຸງຕາພີ່ນ້ອງ. ທາງຝ່າຍຜູ້ບ່າວຈິ່ງຫາມື້ເລີກງານຍາມດີ, ມີສັບສິນຕ່າງໆໄປສູ່ຂໍຜູ້ສາວ.

ໃນການປະຕິບັດເຊັ່ນນີ້ພວກເຮົາດຳເນີນມາເປັນເວລາດົນນານມາຕັ້ງຍຸກສະໄໝສັງຄົມທີ່ມີການຈັດຕັ້ງ ໃນເມື່ອສັງຄົມມີການຂະຫຍາຍຕົວການປະຕິບັດວິທີນີ້ອະດີດກໍຄ່ອຍມີການພັດທະນາຕາມລຳດັບ. ເຖິງປັດຈຸບັນປະເພນີສູ່ຂໍສາວກໍຍັງໝັ້ນຄົງຖາວອນ. ດັ່ງນັ້ນ, ຈຶ່ງຖືວ່າເປັນຮີດຄອງປະເພນີອັນດີງາມຂອງສັງຄົມລາວເຊິ່ງຄົນລາວເປັນທີ່ຍອມຮັບ ແລະ ປະຕິບັດດ້ວຍການສືບທອດມູນເຊື້ອ.

ຢູ່ໃນເລື່ອງທ້າວຮຸ່ງ - ທ້າວເຈືອງເມື່ອເຮົາສັງເກດກົງໄປກົງມາໂດຍອີງໃສ່ສະໄໝຍຸກປະຫວັດສາດ ແລະ ສັງຄົມໃນຍຸກນັ້ນແລ້ວເຮົາກໍຈະເຫັນໄດ້ຢ່າງຈະແຈ້ງວ່າ ແມ່ນປະເພນີສູ່ຂໍສາວໃນສັງຄົມທີ່ກ້າວໜ້າພໍສົມຄວນ. ເພາະວ່າຍຸກສະຫະຊີບປະຖົມບູຮານເປັນເລື່ອງທີ່ແນ່ນອນແລ້ວ, ມະນຸດທຸກຄົນຍັງຢູ່ໃນສັງຄົມລວມສູນ, ເປັນກຸ່ມຄົນ ແລະ ກຸ່ມຄົນກໍຈະມີອຳນາດທາງສັງຄົມຂຶ້ນ, ທັງມີການພົວພັນກັນຫຼາຍຂຶ້ນກວ່າເກົ່າ. ດັ່ງນັ້ນການເອົາຜົວເອົາເມຍໃນເບື້ອງຕົ້ນກໍອາດຈະມີການລັກເອົາ,ໄລຍະຕໍ່ມາເກີດມີຄ່າທຳນຽມຮຽກຮ້ອງເອົາສິນສອດຄ່າດອງ, ສຸດທ້າຍແມ່ນບ່າວ-ສາວຖືກຕ້ອງປອງ

ດອງກັນແລ້ວກໍຕົກລົງເອົາກັນເປັນຄູ່ຄອງຜົວເມຍດ້ວຍຄວາມບໍລິສຸດ ແລະ ຖືກຕ້ອງຕາມປະເພນີຮີດຄອງ. ຖ້າຈະເວົ້າໄປແລ້ວລັກສະນະດັ່ງກ່າວນີ້ກໍຫາກຍັງຄົງຕົວຢູ່ໃນໂລກມະນຸດ, ສ່ວນວ່າການລັກເອົາຍິງສາວມາເປັນເມຍນີ້ບາງຊົນເຜົ່າກໍຍັງມີຢູ່ ແຕ່ກໍກາຍເປັນຮີດຄອງປະເພນີຂອງເຜົ່ານັ້ນໄປແລ້ວ.

ເມື່ອເຮົາສຶກສາເບິ່ງຮີດຄອງປະເພນີການສູ່ຂໍສາວໃນເລື່ອງທ້າວຮຸ່ງ-ທ້າວເຈືອງນີ້ແລ້ວກໍຈະເຫັນຢ່າງຈະແຈ້ງວ່າແມ່ນໄລຍະສັງຄົມມີຄວາມຈະເລີນຮຸ່ງເຮືອງພໍສົມຄວນ, ເຊິ່ງເຮົາຈະເຫັນຕອນທ້າວຮຸ່ງມັກຮັກກັບນາງງ້ອມມ່ອນລູກສາວຂອງເມັງຈຶ່ງແຕ່ງທູດໄປທາບທາມນາງເມັງ ຜູ້ເປັນປ້າວາງຄ່າສິນສອດຢ່າງຫຼວງຫຼາຍດັ່ງຄຳກອນທີ່ວ່າ:

| | |
|---|---|
| ເຂົາຂ່າວເບື້ອງປາງກ່ອນ | ບູຮານ |
| ແຄວນດີຄວນຊ່າງເຮົາ | ຝູງເຖົ້າ |
| ນັບທັງບໍສະພານພ້ອມໄຖເຝືອ | ພໍໝື່ນ |
| ຄຳແຈກເກົ້າກືຮ້ອຍ | ກ່າວຫຼາຍ |
| ຮື່ນໆພ້ອມຝຸງໝູ່ | ທາສີ |
| ສາມພັນປາຍປ່ຽວແລ້ວ | ສາວໃຊ້ |
| ງົວຄວາຍແທ້ທໍລະພີ | ພໍໝື່ນ |
| ປຸນແຕ່ງໃຫ້ພັນພ້ອມ | ຄູ່ເຝືອ |

(ດວງເດືອນ ບຸນຍາວົງ; ໂອທອງ ຄຳອິນຊູ ແລະ ສົມໄພ ວິໄລສັກ, 2000)

ຈາກຄຳກອນນີ້ເຮົາເຫັນວ່າການເອົາສິນສອດຄ່າດອງເປັນເງິນຄຳ, ສິ່ງຂອງ, ຄົນໃຊ້, ງົວຄວາມ ແລະ ອື່ນໆບໍ່ແມ່ນມີຂຶ້ນໃນລະຫວ່າງສະຕະວັດທີ່ VIII-XII ແຕ່ມັນມີມາກ່ອນຍຸກນັ້ນແລ້ວຈາກຄຳກອນວັກທີ 1. ໃນຍຸກສະໄໝນັ້ນການເອົາສິນສອດຄ່າດອງຍັງເຫັນວ່າໜັກໜ່ວງຢູ່ ແລະ ເຫັນວ່າເປັນອຸປະສັກຕໍ່ການເລືອກຄູ່ຄອງ. ປະເພນີການສູ່ຂໍສາວເປັນທີ່ແນ່ນອນແລ້ວວ່າ ບໍ່ມີສະເພາະວັດທະນະທຳລາວເທົ່ານັ້ນບັນດາປະເທດຂ້ອມຂ້າງ ຫຼື ຫົວເມືອງຂຶ້ນຕ່າງໆ, ຊົນຊາດອື່ນທີ່ບໍ່ແມ່ນຊາດລາວກໍມີດັ່ງດຽວກັນເປັນຕົ້ນແມ່ນຊົນຊາດແກວມ້ອຍ. ໃນສະໄໝບູຮານເຖິງວ່າບໍ່ມີຮີດຄອງດັ່ງດຽວກັນໝົດແຕ່ພວກເຂົາກໍເຂົ້າໃຈຄວາມຖືກຕ້ອງດີງາມຕໍ່ຮີດຄອງປະເພນີຂອງລາວແຕ່ງຄຳກອນທີ່ເຈົ້າຊາຍແອງກາເມືອງຄຳວັງ (ເຊື້ອຊາດແກວ) ໄປສູ່ຂໍນາງອົ້ວເຊື້ອຊາດຂອມ ດັ່ງຄຳກອນທີ່ວ່າ:

| | |
|---|---|
| ຄຶດຊອບໃຊ້ງົວວາດ | ລົງອວານ |
| ຍວງມາເຮວຮອດໂຮງ | ເຖິງຫ້ອງ |
| ປຸນຂອງມ້ຽນມອນແຖວ | ຖັນຖີ່ |
| ຂັນແຈກຊ້ອງຄຳເຂັ້ມ | ລວດລາຍ |
| ປະດັບຖີ່ຖ້ອຍເລີຍມອບ | ບັນນາການ |
| ເຮວຮີບ ຍໍມືຖວາຍມອບມອນ | ເມື່ອໄຫວ້ |

ຂໍ້ມູນຕິດຕໍ່:
Email: syvongsak123@gmail.com ໂທ: +85620 98003648

(ດວງເດືອນ ບຸນຍາວົງ; ໂອທອງ ຄຳອິນຊູ ແລະ ສົມໄພ ວິໄລສັກ, 2000)

ສ່ວນວ່າປະເພນີໃນການແຕ່ງດອງໃນລັກສະນະການແຕ່ງດອງຢູ່ໃນມະຫາກາບທ້າວຮຸ່ງ-ທ້າວເຈືອງແມ່ນໄລຍະທີ່ມີຄຸນຄ່າທຳນຽມສິນສອດທີ່ຝ່າຍຊາຍຈະຕ້ອງເສຍໃຫ້ຝ່າຍຍິງຕາມທີ່ໄດ້ຂາດກັນໄວ້ ແລະ ຈັດຢູ່ໃນຫຼັກການແຕ່ງໃນໂຄດເຊື້ອວົງຕະກຸນດຽວກັນ ແລະ ຜູ້ຊາຍສາມາດເອົາເມຍຫຼາຍຄົນແມ່ຍິງມີຜົວພຽງຄົນດຽວ. ກ່ອນຈະໄດ້ແຕ່ງງານກັນກໍຕ້ອງໄດ້ຜ່ານຫຼາຍຂັ້ນຕອນຄື: 1) ເລີ່ມຈາກບ່າວ-ສາວຮັກມັກກັນ ຫຼື ເຖົ້າແກ່ແນະນຳໃຫ້ (ຄຳບູຮານເອີ້ນວ່າ ເຖົ້າແກ່ແໜສາວ); 2) ບ່າວ-ສາວຕິດຕໍ່ກັນ, ໄປມາຫາສູ່ກັນ, ຂຽນສານຫາກັນ; 3) ອັນສຸດທ້າຍກໍແມ່ນເຖົ້າແກ່ທາບທາມສູ່ຂໍແລ້ວແຕ່ງດອງກັນ. ໃນເລື່ອງນີ້ຈະຕົກຢູ່ໃນສາມກໍລະນີສຸດທ້າຍຈະພົບອຸປະສັກ. ສະນັ້ນການສູ່ຂໍຂອງທ້າວຮຸ່ງຈະບໍ່ແມ່ນການສູ່ຂໍຕາມຮີດຄອງປະເພນີແຕ່ແມ່ນການໄດ້ມະເຫສີມາຍ້ອນເປັນຜູ້ກັບທີ່ມີຜົນງານການຕໍ່ສູ້ກັບຂ້າເສິກລະຫວ່າງເມືອງຕໍ່ເມືອງ.

ຢູ່ໃນນີ້ຈະຍົກໃຫ້ເຫັນການແຕ່ງດອງຢູ່ໃນຕະກຸນດຽວເຊິ່ງເປັນຫຼັກການເຊື້ອເຈົ້າພະຍາທີ່ມີມາແຕ່ງບູຮານຖ້າວົງຕະກຸນເຊື້ອເຈົ້າພະຍາໄປແຕ່ງດອງກັບຄົນນອນເຊື້ອວົງຕະກຸນເຊິ່ງວ່າຈະມີຊິນຊັ້ນດຽວກັນກໍຕາມຈະຖືວ່າຜິດກົດລະບຽບ ແລະ ຈະບໍ່ຍອມໃຫ້ແຕ່ງດອງກັນຢ່າງເດັດຂາດດັ່ງຄຳກອນທີ່ວ່າ:

| | |
|---|---|
| ແຕ່ນັ້ນ ມ່າຍໆໜ້າທ້າວຊື່ນ | ຊົມຫົວ |
| ເໝືອນດັ່ງ ຫຼານຍິນເຫງົາຈິ່ງຈາ | ສານຫຼິ້ນ ຊ່າມດາຍ |
| ລອນວ່າ ມົວແຄນຜ້າຍດົງດອນ | ດັ້ນຮອດ ສັນນີ້ |
| ໃຜຫ່ອນເວັ້ນພົງເຊື້ອ | ກົ່ງນາມ |
| ເຂົາກໍ ລືວ່າເຈົ້າອູ່ແກ້ວເຢົາວະຍອດ | ກະກູນຕົນ ນັ້ນເດ |
| ເຊັ່ງງາມຍົດຍິ່ງທາງ | ໄທອ້າງ |
| ອັນໜຶ່ງ ຜົນຄວນສ້ອຍສີໄວ | ຄຳຢາດກໍຍັງ |
| ສັງບໍ່ ຫວ້າຍເຖື່ອນກວ້າງຊົມໃຊ້ | ສິ່ງຄະດີ |

(ດວງເດືອນ ບຸນຍາວົງ; ໂອທອງ ຄຳອິນຊູ ແລະ ສົມໄພ ວິໄລສັກ, 2000)

ໃນຄຳກອນຕອນນີ້ແມ່ນທ້າວແອງກາເປັນເຈົ້າຊາຍຜູ້ປົກຄອງເມືອງຄຳວັງໄດ້ແຕ່ງທູດຊື່ນາຍແສງໄປສົ່ງສານພ້ອມດ້ວຍບັນນາການໄປໄປສູ່ຂໍນາງອົ້ວລາຊະທິດາຂອງຂຸນຊຶມເມື່ອງເງິນຍາງຄັ້ງທີ່ໜຶ່ງແຕ່ຖືກປະຕິເສດ. ຂຸນຊຶມເວົ້າກັບທູດວ່າ "ບໍ່ຫ່ອນເວັ້ນພົງເຊື້ອກົ່ງນາມ" ເວົ້າງ່າຍໆກໍໝາຍຄວາມວ່າບໍ່ຄວນໄປເອົາເມຍນອກເຊື້ອວົງຕະກຸນຂອງຕົນ. ຂຸນຊຶມຍັງແນະນຳໃຫ້ໄປຫານາງອູ່ແກ່ວ, ຄຳຢາດເຊິ່ງເປັນເຊື້ອສາຍແມນ (ແກວ) ຈະດີກ່ວາ. ສ່ວນວ່າຝ່າຍນາງອົ້ວໃນຕົວຈິງແລ້ວບໍ່ແມ່ນນາງອົ້ວປະຕິເສດທ້າວແອງກາວ່າເປັນຄົນນອກເຊື້ອຊາດ, ນອກຕະກຸນແຕ່ຢ່າງໃດເພາະວ່າ ໃນໃຈນາງອົ້ວແມ່ນມີຄວາມຮັກໄຄ່ໄມຕີກັບ ແອງກາຫຼາຍໂດຍອີງຕາມເນື້ອໃນບາງຕອນ (ທ້າວແອງກາເຈົ້າເມືອງຄຳວັງສົ່ງສານຂໍນາງອົ້ວ) ເຮົາ

ຂໍ້ມູນຕິດຕໍ່:
Email: syvongsak123@gmail.com ໂທ: +85620 98003648

ຈະເຫັນວ່ານາງອົ້ວເປັນໃຈຝ່າຍແອງກາກໍເພາະວ່ານາງອົ້ວບໍ່ທັນມີຊູ້ຮັກເຖິງວ່າຈະມີກໍແມ່ນພໍ່ແມ່ຂອງນາງພຽງຝ່າຍດຽວ... ອີກອັນໜຶ່ງນາງອົ້ວກໍຄືງຮູ້ດີວ່າຕົນເອງຕ້ອງແຕ່ງກັບຕະກຸນດຽວກັນໃນຄຳກອນທີ່ວ່າ:

ເມື່ອນັ້ນ ອົ້ວຄ່ຳຄຶດຈອດນ້ອງແລ້ວເລົ່າ ໄຂສານ
ຍິນຄຳວອນຂອບໃຈ ຈິງທ້າວ
ເຫັນວ່າ ໂສມຄານໜ້າປຸນດຽວ ດູເກິ່ງ ກັນແລ້ວ
ພະພໍ່ເຈົ້າໝື່ນມ້າວແຂງຂັ້ນ ຂາດຄະດີ

(ດວງເດືອນ ບຸນຍາວົງ; ໂອທອງ ຄຳອິນຊູ ແລະ ສົມໄພ ວິໄລສັກ, 2000)

ໃນຄຳກອນນີ້ບ່າວ-ສາວມັກຮັກກັນເປັນເຊື້ອຄືກັນ. ຖ້າເວົ້າເຖິງບົດບາດໜ້າທີ່ທ້າວແອງກາສູງກວ່າເພາະວ່າເປັນເຈົ້າກະສັດປົກຄອງເມືອງທັງມີເງິນຄຳຫຼວງຫຼາຍແທ້ ສ່ວນນາງອົ້ວກໍແມ່ນເຊື້ອເຈົ້າກະສັດແຕ່ບໍ່ແມ່ນກະສັດປົກຄອງເມືອງພຽງແຕ່ລາຊະທິດາຂອງຂຸນຊຶມ. ຖ້າເວົ້າສະພາບສັງຄົມປັດຈຸບັນເຫັນວ່າເໝາະສົມ ແຕ່ເປັນຫຍັງຈິ່ງເອົາກັນບໍ່ໄດ້ ທັງນີ້ກໍເພາະວ່າບໍ່ແມ່ນເຊື້ອສາຍວົງຕະກຸນດຽວດັ່ງຄຳກອນທີ່ວ່າ:

ເມື່ອນັ້ນ ພະບາດຮູ້ຮັບພາກ ສອງນາຍ
ອັນຈັກ ເປັນກົມກຽວຢ່າລອນ ມາຕ້ານ
ຄຶດທີ່ ສາຍນາມເນື້ອຈອມໄທ ທ້າວຮຸ່ງ ກູພູ້ນ
ພໍ່ພາກໄວ້ເມືອງບ້ານ ຢູ່ພອຍ...
ໂອມນາງຮູ້ຈາຜອນ ຕ້ານເຕິບ ສັນນີ້
ບໍ່ໃຊ່ ເຊື້ອລູກຂ້ອຍຈິງແທ້ ກ່າວຄອນ.

(ດວງເດືອນ ບຸນຍາວົງ; ໂອທອງ ຄຳອິນຊູ ແລະ ສົມໄພ ວິໄລສັກ, 2000)

ຫຼັງຈາກການສູ່ຂໍຂອງທ້າວແອງຄັ້ງໜຶ່ງບໍ່ສຳເລັດກໍໃຫ້ເຫັນໃຈດ້ອຍ, ແຕ່ເຖິງຢ່າງໃດກໍຍັງຖືກຂຸນຊຶ່ມປະຕິເສດ ແລະ ຍັງບອກວ່າ: ຄວາມຫວັງຊິໄດ້ເປັນແກ່ວດອງກັນນັ້ນບໍ່ມີດອກ! ຢ່າສາ! ເພາະວ່າຍັງຄິດເຫັນທ້າວຮຸ່ງຜູ້ເປັນເຊື້ອຂຸນຈອມ, ທ້າວແອງກາ ບໍ່ແມ່ນເຊື້ອສາຍແທ້ບໍ່ຄວນຈະມາຂໍເຊິ່ງເປັນເຫດໃຫ້ແອງກາຄຽດຈົນເກີດສົງຄາມຊີງນາງຂຶ້ນ.

ພວກເຮົາຄືງຮູ້ດີວ່າ ເມື່ອນາງອົ້ວເຂົ້າໃຈແອງກາ ແຕ່ບໍ່ມີຜົນສຳເລັດ, ກໍເປັນຍ້ອນນາງອົ້ວເຂົ້າໃຈດີໃນເລື່ອງຮີດຄອງປະເພນີການສົມລົດເປັນຢ່າງດີ ແລະກໍນັບວ່າເປັນສັງຄົມທີ່ຂ້ອນຂ້າງມີລະບຽບຫຼັກການທີ່ເດັດຂາດຢ່າງແທ້ຈິງ

(ສົມທະເພີຍ ສີວົງສັກ ແລະອຳໄພ ສອນທະລາ, 2019).

## III. ຂັ້ນສະຫຼຸບ

❖ **ຄູເນັ້ນຈຸດສຳຄັນຂອງບົດຮຽນ**

- ການຂໍລູກຈາກແຖນ ແລະ ການກຳເນີດເດັກນ້ອຍຂອງຄົນບູຮານ
- ປະເພນີການສູ່ຂໍສາວ ແລະ ການແຕ່ງດອງໃນວົງຄະນະຍາດດຽວກັນ.

## IV. ວັດ ແລະປະເມີນ

ຂໍ້ມູນຕິດຕໍ່:

Email: syvongsak123@gmail.com ໂທ: +85620 98003648

- ຄູຖາມຂໍ້ຂ້ອງໃຈຂອງນັກຮຽນ (ຖ້າມີ) ຄູອະທິບາຍຄືນ
- ຄູຕັ້ງຄຳຖາມ: ແຕ່ລະຂໍ້ຂອງບົດຮຽນ
- ໃຫ້ນັກຮຽນຕອບ 1-2 ຄົນ
- ຄູສັງເກດຄຳຕອບ ແລະ ສະຫຼຸບຄືນ

**V. ຂັ້ນຕັກເຕືອນ**

- ຄູແນະນຳນັກຮຽນອ່ານບົດຮຽນໃໝ່
- ສຶກສາແນວຄິດຂອງຜູ້ຮຽນ
- ມອບວຽກບ້ານ

**ເອກະສານອ້າງອີງ**

ສິມທະເພີຍ ສີວົງສັກ ແລະ ອຳໄພ ສອນທະລາ. (2019). ວັນນະຄະດີລ້ານຊ້າງ ຄະນະສຶກສາສາດ ມະຫາວິທະຍາໄລສຸພານຸວົງ.

ດວງເດືອນ ບຸນຍາວົງ; ໂອທອງ ຄຳອິນຊູ ແລະ ສິມໄພ ວິໄລສັກ (2000) **ມະຫາກາບທ້າວຮຸ່ງ-ທ້າວເຈືອງເຫຼັ້ມ**1 ຫໍສະ ໝຸດແຫ່ງຊາດ.

ດວງເດືອນ ບຸນຍາວົງ, ໂອທອງ ຄຳອິນຊູ, ສິມໄພ ວິໄລສັກ ແລະ ຄຳສອນ ທອງມີໄຊ (2003) **ມະຫາກາບທ້າວຮຸ່ງ-ທ້າວເຈືອງເຫຼັ້ມ 2** ຄະນະອັກສອນສາດ ມະຫາວິທະຍາໄລແຫ່ງຊາດ.

ຄູສອນປະຈຳວິຊາ



ປທ.ສິມທະເພີຍ ສີວົງສັກ